ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມຊັບສິນທາງປັນຍາ

ຈກ 0973 ເລກທີ......../ກຊປ

ນະຄອນຫຼວງວຽງຈັນ, ວັນທີ 26 JUN 2023

# ແຈ້ງການ

**ເຖິງ:** ບັນດາ ບໍລິສັດຕົວແທນ ຂໍຈົດທະບຽນ ຊັບສິນທາງປັນຍາ.

**ເລື່ອງ:** ການຍົກເລີກລັດຕິດໃບທະບຽນສານ ເພື່ອຢັ້ງຢືນຄວາມຖືກຕ້ອງໃນການມອບສິດ ທີ່ເປັນຕົ້ນສະບັບ.

- ອີງຕາມ ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 0440/ອຄ, ຂໍ້ຕົກລົງ ສະບັບເລກທີ 0438/ອຄ, ອີງຕາມ ຂໍ້ຕົກລົງ ສະບັບເລກທີ 0436/ອຄ, ຂໍ້ຕົກລົງ ສະບັບເລກທີ 0435/ອຄ, ຂໍ້ຕົກລົງ ສະບັບເລກທີ 0434/ອຄ, ລົງວັນທີ 30 ມີນາ 2023.

ກົມຊັບສິນທາງປັນຍາ, ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ອີງໃສ່ຂໍ້ຕົກລົງຕ່າງໆ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ www.dip.gov.la ຊຶ່ງໄດ້ມີການຍົກເລີກການຮຽກຮ້ອງເອົາໃບທະບຽນສານ ເພື່ອຢັ້ງຢືນໃນການມອບສິດ ສຳລັບການຍື່ນໃບມອບສິດທີ່ເປັນຕົ້ນສະບັບ ເພື່ອເປັນການອຳນວຍຄວາມສະດວກ ພ້ອມທັງເປັນການປັບປຸງຂອດຂັ້ນໃນການຍື່ນຄຳຮ້ອງ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຈົດທະບຽນ ນຳກົມຊັບສິນທາງປັນຍາ. ສະນັ້ນ, ການຍື່ນເອກະສານເພີ່ມເຕີມ ເຊັ່ນ: **ໃບມອບສິດ (Power of Attorney), ໜັງສືຢັ້ງຢືນການຖືສິດ (Deed of Inventorship), ໜັງສືຢັ້ງຢືນການໂອນສິດ (Assignment), ໜັງສືຢັ້ງຢືນການອະນຸຍາດນຳໃຊ້ (Licensing), ໜັງສືຢັ້ງຢືນການປ່ຽນຊື່ ແລະ/ຫຼື ທີ່ຢູ່ (Declaration of Change)** ທີ່ເປັນຕົ້ນສະບັບແມ່ນບໍ່ຈຳເປັນຕ້ອງມີໃບຢັ້ງຢືນທະບຽນສານ ໃນການມອບສິດດັ່ງກ່າວ, ບັນດາ ບໍລິສັດຕົວແທນ ຂໍຈົດທະບຽນ ຊັບສິນທາງປັນຍາ ໃນການຍື່ນໃບມອບສິດທີ່ເປັນຕົ້ນສະບັບດັ່ງກ່າວ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍກ່ຽວກັບຄວາມແທ້ຈິງຂອງເອກະສານໃນການມອບສິດ ໃນກໍລະນີມີຂໍ້ສົງໄສ ກົມຊັບສິນທາງປັນຍາ ຈະທວງຖາມ ຫຼື ໃຫ້ດຳເນີນການ ຢັ້ງຢືນ ຕາມແຕ່ລະກໍລະນີ ໃນການມອບສິດນັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດດ້ວຍ

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ ★ ກົມຊັບສິນທາງປັນຍາ ★

ສັນຕິສຸກ ພູນສະຫວັດ

(English translation)

Lao People's Democratic Republic
Peace Independence Democracy Unity Prosperity

Ministry of Industry and Commerce
Department of Intellectual Property

No. 0973/DIP
Vientiane Capital, 26 June 2023

# Notice

**To**: Representative companies for registration intellectual property

**Subject**: Revocation the attachment of notarization for certifying the original power of attorney.

- Based on Intellectual Property Law No. 38/NA, dated 15 November 2017;
- Based on Decision No. 0440/IC, Decision No. 0438/IC, Decision No. 0436/IC, Decision No. 0435/IC, Decision No. 0434/IC, dated 30 March 2023.

The Department of Intellectual Property would like to inform you that the Decisions regarding the registration of industrial property www.dip.gov.la which has revoked the request notarization for certifying the original power of attorney, to facilitate as well as to improve the steps in submitting applications and documents related to the registration with the Department of Intellectual Property. Therefore, the submission of additional documents such as: Power of Attorney, Deed of Inventorship, Assignment, Licensing, Declaration of Change of Name and/or Address, which is original, does not require a notarization for power of attorney of such rights, representative companies request for registration intellectual property in submitting the original power of attorney should be responsible before the law regarding the authenticity of power of attorney of rights, in case of any doubt, the Department of Intellectual Property will ask or verify according to each case of power of attorney.

Therefore, we would like to inform you for acknowledgement and implementation.

Director General of Department

Signed & sealed

Santisouk Phounsavath